ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຊື່ເຈົ້າຂອງໂຄງການ: ອົງການກາແດງແຫ່ງຊາດລາວ　　　　ເລກທີ: 0387 /ກດລ

ນະຄອນຫລວງວຽງຈັນ,ວັນທີ: 03/5/2023

## ຫນັງສືແຈ້ງເຊີນປະມູນ

1. ອົງການກາແດງແຫ່ງຊາດລາວ ໄດ້ຮັບອະນຸມັດງົບປະມານລັດຖະບານ ສົກປີ 2023 (ພາກ62) ເພື່ອດຳເນີນການຈັດຊື້ສິນຄ້າ ເຊັ່ນ:ນ້ຳຢາກວດພະຍາດ, ວັດຖຸອຸປະກອນດ້ານການແພດ ແລະ ເຄື່ອງບຳລຸງ, ດ້ວຍການດຳເນີນການປະມູນແບບເປີດກ້ວາງ. ຄະນະກຳມະການການປະມູນ ຈັດຊື້ນ້ຳຢາກວດພະຍາດ, ວັດຖຸອຸປະກອນການແພດ ແລະ ເຄື່ອງບຳລຸງ ສຳລັບວຽກງານເລືອດປະຈຳປີ 2023 ໃຫ້ບັນດາສູນເລືອດທົ່ວປະເທດ, ຂໍເຊີນ ບັນດາບໍລິສັດ/ວິສາຫະກິດ/ຮ້ານ ທີ່ສົນໃຈ ແລະ ມີຄຸນນະວຸດທິເຫມາະສົມ ເຂົ້າຍື່ນຊອງປະມູນ ສຳລັບສະຫນອງສິນຄ້າ ນ້ຳຢາກວດພະຍາດ, ວັດຖຸອຸປະກອນການແພດ ແລະ ເຄື່ອງບຳລຸງ ໂດຍແບ່ງເປັນສອງພູດຄື:

   **<u>ພູດທີ 01:</u>** ນ້ຳຢາກວດພະຍາດ, ຖົງເລືອດ ແລະ ເຄື່ອງຮັບໃຊ້ທາງການແພດ ສຳລັບ ສູນເລືອດທົ່ວປະເທດ. ໄລຍະການຈັດສົ່ງແມ່ນ ຊ້າສຸດບໍ່ໃຫ້ເກີນ 1 ເດືອນ.

   **<u>ພູດທີ 02:</u>** ເຄື່ອງບຳລຸງ ສຳລັບ ສູນເລືອດທົ່ວປະເທດ, ໄລຍະການຈັດສົ່ງແມ່ນ ຊ້າສຸດບໍ່ໃຫ້ເກີນ 1 ເດືອນ.

2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນແບບເປີດກວ້າງທີ່ໄດ້ກຳນົດໄວ້ຢູ່ໃນກົດຫມາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດຫມາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ: 0477/ກງ, ລົງວັນທີ 13 ກຸມພາ 2019.

3. ການປະມູນນີ້ ອະນຸຍາດໃຫ້ທຸກ ບໍລິສັດ/ວິສາຫະກິດ/ຮ້ານ ທີ່ມີຄຸນນະວຸດທິເຫມາະສົມ, ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດຫມາຍທີ່ກ່ຽວພັນກັບການສະຫນອງສິນຄ້າ, ອຸປະກອນ ແລະ ການບໍລິການທີ່ຕ້ອງການ ແລະມີໃບຢັ້ງຢືນການເສຍພັນທະອາກອນເປັນປົກກະຕິຕາມລະບຽບການຂອງຂະແຫນງການສ່ວຍສາອາກອນ;

4. ບັນດາບໍລິສັດ/ວິສາຫະກິດ/ຮ້ານ ທີ່ມີຄຸນນະວຸດທິເຫມາະສົມ ສົນໃຈສາມາດຕິດຕໍ່ພົວພັນເອົາເອກກະສານປະມູນໄດ້ທີ່ ສະຖາບັນເລືອດແຫ່ງຊາດ ອົງການກາແດງແຫ່ງຊາດລາວ ຕຶກ 4ຊັ້ນ, ຢູ່ຊັ້ນ4 ບ້ານຊຽງຍືນ ເມືອງ ຈັນທະບູລີ ນະຄອນຫລວງວຽງຈັນ, ໂທລະສັບ : 021 218922, 22230353, 28034992, ອີເມວ chanthala2010@gmail.com,ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ຕາມທີ່ຢູ່ຂ້າງເທິງໃນວັນເວລາລັດຖະການ.

5. ບັນດາບໍລິສັດ/ວິສາຫະກິດ/ຮ້ານໃດ ທີ່ຕ້ອງການຊື້ເອກະສານປະມູນ ພູດທີ 1 ແລະ ພູດທີ 2 ແມ່ນໃຫ້ມາພົວພັນເອົາ ຕາມທີ່ຢູ່ຂ້າງເທິງໃນວັນເວລາລັດຖະການ ເລີ່ມຂາຍແຕ່ວັນທີ 5/5/20223 ເປັນຕົ້ນໄປ. ຊອງປະມູນ ພູດທີ 1: ລາຄາ 1,000,000ກີບ/ຊອງ ແລະ ຊອງປະມູນ ພູດ 2: ລາຄາ 300,000 ກີບ/ຊອງ, ວິທີການຊຳລະຕ້ອງຈ່າຍເປັນເງິນສົດ.

6. **<u>ຊອງປະມູນ ພູດທີ 01</u>**: ຕ້ອງສົ່ງກ່ອນເວລາ 13:30 ໂມງ ຂອງວັນທີ: 7/06/2023. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງແມ່ນຈະປິດຮັບແລະເປີດຊອງໃນເວລາ 13:30ໂມງ, ຂອງວັນທີ: 07/06/2023;

7. **<u>ຊອງປະມູນ ພູດທີ 02</u>**: ຕ້ອງສົ່ງກ່ອນເວລາ 15:00 ໂມງ ຂອງວັນທີ: 07/06/2023. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງແມ່ນຈະປິດຮັບແລະເປີດຊອງໃນເວລາ 15:00ໂມງ, ຂອງວັນທີ: 07/6/2023, ຊອງປະມູນທັງສອງພູດ ແມ່ນຈະເປີດຊອງຂຶ້ນທີ່ ຫ້ອງປະຊຸມ ສະຖາບັນເລືອດແຫ່ງຊາດ ອົງການກາແດງແຫ່ງຊາດລາວ ຕຶກໃຫມ່ (ຊັ້ນ 4) ສະຖານທີ່ຕັ້ງຢູ່: ບ້ານ ຊຽງຍືນ, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ (ເຂດທາດດຳ). ໂດຍຊ້ອງຫນ້າຄະນະກຳມະການປະມູນ ແລະຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳ.

8. ບັນດາບໍລິສັດ-ວິສາຫະກິດ-ຮ້ານ ທີ່ສົນໃຈເຂົ້າຮ່ວມການປະມູນຕ້ອງປະກອບແບບຟອມໃຫ້ຄົບຖ້ວນຕາມເອກະສານເງື່ອນໄຂທີ່ໄດ້ກຳນົດໄວ້ຢ່າງຖືກຕ້ອງ ແລະຄົບຖ້ວນ.

9. ດັ່ງນັ້ນຈຶ່ງແຈ້ງມາຍັງ ບັນດາບໍລິສັດ-ວິສາຫະກິດ-ຮ້ານ ທີ່ສົນໃຈເຂົ້າຮ່ວມການປະມູນຊາບ.

**ຫົວຫນ້າຫ້ອງການອົງການກາແດງແຫ່ງຊາດລາວ**

ຫ້ອງການ

ດຣ. ກາວີພອນ ສຸດທິ